ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 08 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 FEB 2022

# ຂໍ້ຕົກລົງ
# ວ່າດ້ວຍຄ່າບໍລິການກ່ຽວກັບການປ່ຽນແປງທີ່ຕ້ອງໄດ້ຂໍອະນຸຍາດ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຂໍອະນຸຍາດດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ສະບັບເລກທີ 22/ຄຄຊ, ລົງວັນທີ 23 ມິຖຸນາ 2021.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

**ມາດຕາ 1** ຄ່າບໍລິການ ກ່ຽວກັບການປ່ຽນແປງທີ່ຕ້ອງໄດ້ຂໍອະນຸຍາດ ຂອງສະຖາບັນສື່ກາງດ້ານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ໃນການສະເໜີຂໍເພີ່ມປະເພດທຸລະກິດ ຈຳນວນ 10.000.000 ກີບ ຕໍ່ຄັ້ງ.

**ມາດຕາ 2** ສະຖາບັນສື່ກາງດ້ານຫຼັກຊັບ ຕ້ອງຊຳລະຄ່າບໍລິການ ກ່ຽວກັບການປ່ຽນແປງທີ່ຕ້ອງໄດ້ຂໍອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ພາຍໃນວັນທີ່ໄດ້ຮັບໃບອະນຸຍາດ ຈາກຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3** ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າສຳນັກງານ ຄຄຊ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ພອງຈັນດາ ແສງສຸລິວົງ